## A. <u>ນຳສະເໜີການບໍລິຫານການຈັດການແບບຍືນຍົງຢ່າງມີປະສິດຕິພາບ.</u>

| | |
|---|---|
| **A.1.** | ການຈັດຕັ້ງໄດ້ນຳໃຊ້ລະບົບການບໍລິຫານໄລຍະຍາວແບບຍືນຍົງເຊິ່ງສອດຄ່ອງກັບສະພາບແວດລ້ອມຄວາມເປັນຈິງ ແລະ ຂົງເຂດທີ່ກ່ຽວຂ້ອງ ທີ່ສາມາດແກ້ໄຂບັນຫາສິ່ງແວດລ້ອມ, ວັດທະນະທຳ, ຄຸນນະພາບ, ສຸຂະພາບ ແລະ ຄວາມປອດໄພ. |
| **A.2.** | ການຈັດຕັ້ງແມ່ນຕ້ອງປະຕິບັດໃຫ້ສອດຄ່ອງເໝາະສົມຕາມແຕ່ລະທ້ອງຖິ່ນຈົນໄປຫາລະດັບສາກົນທີ່ເໝາະສົມບໍ່ວ່າຈະເປັນດ້ານກົດໝາຍ ແລະ ກົດລະບຽບຂໍ້ບັງຄັບ (ລວມມີຂົງເຂດອື່ນໆ ເຊັ່ນ ຂົງເຂດດ້ານສຸຂະພາບ, ຄວາມປອດໄພ, ລັກສະນະຕ່າງໆດ້ານແຮງງານ ແລະ ກ່ຽວກັບສິ່ງແວດລ້ອມ). |
| **A.3.** | ທຸກຂະແໜງການຈະໄດ້ຮັບການແນະນຳເປັນແຕ່ລະໄລຍະ ແລະ  ການຝຶກອົບຮົມທີ່ກ່ຽວຂ້ອງກັບບົດບາດ ແລະ ຄວາມຮັບຜິດຊອບຕ່າງໆໃນຂົງເຂດ ສະພາບແວດລ້ອມ, ສັງຄົມ, ວັດທະນະທຳ, ເສດຖະກິດ, ຄຸນນະພາບ, ບັນຫາຕ່າງໆດ້ານສຸຂະພາບ ແລະ ຄວາມປອດໄພ. |
| **A.4.** | ຄວາມເພິ່ງພໍໃຈຂອງລູກຄ້າລວມມີພາກສ່ວນທາງດ້ານຄວາມຍືນຍົງ ຈະຖືກວັດແທກ ແລະ ແກ້ໄຂໃຫ້ຖືກຕ້ອງ. |
| **A.5.** | ເຄື່ອງມືດ້ານການສົ່ງເສີມ ແມ່ນ ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແນວທາງຂອງອົງການຈັດຕັ້ງ ແລະ ຜະລິດຕະພັນ ແລະ ການບໍລິການຂອງທາງອົງການຈັດຕັ້ງ, ລວມເຖິງການຮຽກຮ້ອງອ້າງສິດທາງດ້ານຄວາມຍືນຍົງ. ໂດຍບໍ່ໄດ້ໃຫ້ຄຳໝັ້ນສັນຍາເກີນກວ່າຄວາມສາມາດທີ່ຈະຕອບສະໜອງໄດ້ໃນຕົວຈິງ. |
| **A.6.** | ການວາງແຜນ, ການອອກແບບ, ການກໍ່ສ້າງ, ການປັບປຸງປະຕິຮູບ, ການດຳເນີນການ ແລະ ການຮື້ຖອນຕຶກ ແລະ ໂຄງລ່າງ…<br><br>• A.6.1. ເພື່ອໃຫ້ສອດຄ່ອງກັບຂໍ້ຮຽກຮ້ອງຕ້ອງການທາງດ້ານການແບ່ງຂອບເຂດ ແລະ ສອດຄ່ອງກັບກົດໝາຍຕ່າງໆໃນການປົກປ້ອງພື້ນທີ່ຕ່າງໆ ແລະ ກຳນົດກົດໝາຍທີ່ກ່ຽວຂ້ອງກັບເຂດອະນຸລັກ  ແລະ ເຂດມໍລະດົກ.<br><br>• A.6.2. ເຄົາລົບນັບຖືດ້ານສິ່ງແວດລ້ອມທີ່ຢູ່ອ້ອມຂ້າງຂອງມູນມໍລະດົກດ້ານທຳມະຊາດ ແລະ ວັດທະນະທຳ ໃນການວາງແຜນ, ການກຳນົດສະຖານທ ິ່, ການປະເມີນຜົນການອອກແບບ ແລະ ຜົນກະທົບທີ່ຈະເກີດຂຶ້ນ.<br><br>• A.6.3. ນຳໃຊ້ການປະຕິບັດ ແລະ ວັດຖຸດິບ ທີ່ຍືນຍົງໂດຍເໝາະສົມກັບທ້ອງຖິ່ນ.<br><br>• A.6.4. ຕອບສະໜອງການເຂົ້າເຖິງໃຫ້ແກ່ບັນດາບຸກຄົນທີ່ມີຄວາມຕ້ອງການພິເສດຕາມແຕ່ລະຄວາມເໝາະສົມ |

| | |
|---|---|
| A.7. | ສິດນຳໃຊ້ທີ່ດິນ, ນ້ຳ, ແລະ ການໄດ້ມາຂອງຊັບສິນບັດແມ່ນຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບສິດທິທ້ອງຖິ່ນອັນເປັນແບບລວມສູນ ແລະ ຢູ່ໃນທ້ອງຖິ່ນ, ລວມເຖິງ ສິດເສລີພາບ, ໄດ້ຮັບຄວາມຍິນຍອມເຫັນດີ ແລະ ແຈ້ງໃຫ້ຮູ້  ແລະ ບໍ່ມີການຮຽກຮ້ອງໃຫ້ຍົກຍ້າຍຖິ່ນ. |
| A.8. | ຂໍ້ມູນກ່ຽວກັບການຕີລາຄາທາງດ້ານສະພາບແວດລ້ອມທາງທຳມະຊາດ, ວັດທະນະທຳທ້ອງຖິ່ນ, ແລະ ມໍລະດົກທາງວັດທະນະທຳ ແມ່ນໄດ້ມີການເຜີຍແຜ່ໃຫ້ແກ່ບັນດາລູກຄ້າ, ພ້ອມທັງຊີ້ແຈງເຖິງຄວາມເໝາະສົມໃນການວາງໂຕໃນເວລາທີ່ໄປຢ້ຽມຊົມສະຖານທີ່ທ່ອງທ່ຽວທາງດ້ານທຳມະຊາດ, ຢ້ຽມຊົມວິຖີການດຳລົງຊີວິດ ແລະ ສະຖານທີ່ມໍລະດົກທາງດ້ານວັດທະນະທຳ |

## B. <u>ເສີມຂະຫຍາຍຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມໃຫ້ແກ່ຊຸມຊົນໃນທ້ອງຖິ່ນ ແລະ ຫລຸດຜ່ອນຜົນກະທົບທາງດ້ານລົບ.</u>

| | |
|---|---|
| **B.1.** | ການຈັດຕັ້ງໄດ້ມີການສະໜັບສະໜູນການລິເລີ່ມຕໍ່ການພັດທະນາຊຸມຊົນ ແລະ ໂຄງລ່າງທ້ອງຖິ່ນລວມເຖິງບັນດາພາກສ່ວນອື່ນໆທີ່ກ່ຽວຂ້ອງ, ການສຶກສາ, ການຝຶກອົບຮົມ, ດ້ານສຸຂະພາບ ແລະ ສຸຂະອານາໄມ. |
| **B.2.** | ປະຊາຊົນພາຍໃນທ້ອງຖິ່ນ ແມ່ນໄດ້ຮັບໂອກາດອັນເທົ່າທຽມກັນໃນການຈ້າງງານລວມທັງການໄດ້ຮັບຕຳແໜ່ງຕ່າງໆໃນລະດັບບໍລິຫານ. ລູກຈ້າງທຸກຄົນຈະໄດ້ຮັບໂອກາດໃນການຝຶກອົບຮົມຢ່າງເປັນປົກກະຕິ, ແລະ ໂອກາດ ກ້າວໜ້າດ້ານໜ້າທີ່ວຽກງານທີ່ເທົ່າທຽມກັນ. |
| **B.3.** | ການບໍລິການ ແລະ ຜະລິດຕະພັນຕ່າງໆໃນທ້ອງຖິ່ນຖືກຈັດຊື້ ແລະ ຖືກນຳສະເໜີຈາກອົງການຈັດຕັ້ງ, ໂດຍການປະຕິບັດຕາມຫຼັກການການຄ້າທີ່ຍຸດຕິທຳ. |
| **B.4.** | ອົງການຈັດຕັ້ງສະເໜີລາຍໄດ້ໃຫ້ບັນດານັກທຸລະກິດຂະໜາດນ້ອຍໃນທ້ອງຖິ່ນເພື່ອມາພັດທະນາ ແລະ ການຂາຍຜະລິດຕະພັນແບບຍືນຍົງໂດຍຖືກອີງໃສ່ທຳມະຊາດ,ປະຫວັດສາດ ແລະ ວັດທະນະທຳຂອງຂົງເຂດດັ່ງກ່າວ (ລວມມີຈຳພວກອາຫານ ແລະ ເຄື່ອງດື່ມຕ່າງໆ, ຫັດຖະກຳ, ການສະແດງທາງດ້ານສິລະປະ, ຜະລິດຕະພັນທາງດ້ານກະສິກຳ, ແລະ ອື່ນໆ.). |
| **B.5.** | ກົດລະບຽບອັນມີການບັນທຶກເກັບກຳມ້ຽນສຳລັບກິດຈະກຳຕ່າງໆໃນແຕ່ລະຊຸມຊົນທີ່ມີເອກະລັກພື້ນເມືອງດັ້ງເດີມ ແລະ ທ້ອງຖິ່ນໄດ້ຖືກພັດທະນາ ແລະ ປະຕິບັດໂດຍການຮ່ວມມື ແລະ ການເຫັນພ້ອມຕ້ອງກັນກັບຊຸມຊົນທີ່ກ່ຽວຂ້ອງ. |
| **B.6.** | ການຈັດຕັ້ງໄດ້ປະຕິບັດນຳໃຊ້ນະໂຍບາຍຕໍ່ຕ້ານກັບການໂຄສະນາສິນຄ້າຕ່າງໆແບບຫວັງຜົນກຳໄລ, ເປັນຕົ້ນແມ່ນການຄ້າປະເວນີ ຫຼື ຮູບແບບໃດໜຶ່ງທີ່ມີລັກສະນະຂູດຮີດ ແລະ ສ້າງຄວາມລຳບາກ, ໂດຍສະເພາະແມ່ນກ່ຽວກັບບັນດາເດັກນ້ອຍ, ຊາວໜຸ່ມ, ແມ່ຍິງ ແລະ ຊົນເຜົ່າກຸ່ມນ້ອຍ. |
| **B.7.** | ອົງການຈັດຕັ້ງສະເໜີໂອກາດໃນການຈ້າງງານອັນເທົ່າທຽມໃຫ້ກັບແມ່ຍິງ, ຊົນເຜົ່າກຸ່ມນ້ອຍໃນທ້ອງຖິ່ນ ແລະ ອື່ນໆ, ລວມທັງໂອກາດດ້ານຕຳແໜ່ງການຈັດການບໍລິຫານ,ແລະ ມີການສະກັດກັ້ນການໃຊ້ແຮງງານເດັກນ້ອຍ. |
| **B.8.** | ການປົກປ້ອງຄຸ້ມຄອງຕາມກົດໝາຍແຫ່ງຊາດ ແລະ ສາກົນຕໍ່ກັບລູກຈ້າງໃຫ້ຄວາມເຄົາລົບໃນການປະຕິບັດໃຫ້ເຄັ່ງຄັດ, ແລະ ບັນດາລູກຈ້າງຕ້ອງໄດ້ຮັບຄ່າຈ້າງອີງຕາມຄ່າຄອງຊີບຂັ້ນຕ່ຳ. |

| | |
|---|---|
| B.໙. | ການເຄື່ອນໄຫວຂອງການຈັດຕັ້ງ<br>ບໍ່ໄດ້ເຮັດໃຫ້ຊຸມຊົນທີ່ຢູ່ໃກ້ຄຽງຕົກຢູ່ໃນສະພາວະຄວາມສ່ຽງໃນການໃຫ້ການບໍລິການພື້ນຖານຕ່າງໆ, ເປັນຕົ້ນແມ່ນ ອາຫານ, ນໍ້າ, ພະລັງງານ, ການເບິ່ງແຍງສຸຂະພາບ ຫຼື ການສົ່ງເສີມອານາໄມ, ໃຫ້ຊຸມຊົນຕ່າງໆໃນເຂດອ້ອມຂ້າງ. |
| B.10. | ກິດຈະກໍາທາງດ້ານການທ່ອງທ່ຽວ ບໍ່ໄດ້ ມີການກະທົບຕໍ່ກັບສິດ ແລະ ໂອກາດຂອງຄົນພາຍໃນທ້ອງຖິ່ນໃນການຫາລ້ຽງຊີບ,ລວມມີດ້ານການນໍາໃຊ້ ດິນ ແລະ ຊັບພະຍາກອນທາງນໍ້າ, ສິດໃນການສັນຈອນໄປມາ, ການຂົນສົ່ງ ແລະ ຈັດສັນທີ່ຢູ່ອາໃສ. |

## C. <u>ເສີມຂະຫຍາຍຜົນປະໂຫຍດທາງດ້ານສິ່ງແວດລ້ອມ ແລະ ຫລຸດຜ່ອນຜົນກະທົບທາງດ້ານລົບ</u>

| | |
|---|---|
| C.1. | ການຈັດຕັ້ງຕິດຕາມທາງດ້ານແບບແຜນ ຫຼື ກົດລະບຽບດ້ານພຶດຕິກຳສຳລັບການຢ້ຽມຢາມຈຸດທີ່ຕັ້ງຕ່າງໆທີ່ມີຄວາມລະອຽດອ່ອນທາງປະຫວັດສາດ ແລະ ວັດທະນະທຳ, ເພື່ອເປັນການຫລຸດຜ່ອນຜົນກະທົບດ້ານລົບຈາກແຂກຜູ້ມາຢ້ຽມຢາມ ແລະ ຜັນຂະຫຍາຍຄວາມມ່ວນຊື່ນໃນການທ່ອງທ່ຽວ. |
| C.2. | ວັດຖຸບູຮານ ແມ່ນຖືກຫ້າມບໍ່ໃຫ້ມີການຊື້-ຂາຍ, ແລກປ່ຽນ, ນຳໄປວາງສະແດງ ຫຼື ເພື່ອຈຸດປະສົງທາງການຄ້າ, ຍົກເວັ້ນແຕ່ໄດ້ຮັບອະນຸຍາດຈາກກົດໝາຍທ້ອງຖິ່ນ ແລະ ສາກົນ. |
| C.3. | ການຈັດຕັ້ງມີສ່ວນຊ່ວຍໃນການປ້ອງກັນ ແລະ ການປົກປັກຮັກສາຊັບສົມບັດ ແລະ ທີ່ຕັ້ງ ອັນມີຄວາມສຳຄັນທາງດ້ານ ວັດທະນະທຳ, ບູຮານ ແລະ ປະຫວັດສາດອັນເກົ່າແກ່ຂອງທ້ອງຖິ່ນ, ແລະ ບໍ່ໄດ້ຂັດຂວາງສິດໂອກາດການເຂົ້າເຖິງຂອງປະຊາຊົນທ້ອງຖິ່ນເຊັ່ນດຽວກັນ. |
| C.4. | ການຈັດຕັ້ງລວບລວມອົງປະກອບຕ່າງໆທາງດ້ານສິ◌ິລະປະ,ສະຖາປັດຍະກຳ ຫຼື ມູນມໍລະດົກທາງວັດທະນະທຳເຂົ້າເປັນໜຶ່ງດຽວໃນການດຳເນີນງານ, ການອອກແບບ, ການປະດັບ, ອາຫານ, ຫຼື ຮ້ານຄ້າຕ່າງໆ; ພ້ອມກັບໃຫ້ຄວາມເຄົາລົບນັບຖືຊັບສິນທາງປັນຍາຂອງປະຊາຊົນໃນທ້ອງຖິ່ນ. |

# D. <u>ເສີມຂະຫຍາຍຜົນປະໂຫຍດທາງດ້ານສິ່ງແວດລ້ອມໃຫ້ຫຼາຍຂຶ້ນ ແລະ ຫລຸດຜ່ອນຜົນກະທົບໃນທາງລົບ.</u>

<table>
<tr><td>D.1.</td><td>ການສະຫງວນຮັກສາແຫຼ່ງຊັບພະຍາກອນ<br><br>• D.1.1. ມີນະໂຍບາຍສະໜັບສະໜູນໃຫ້ຊື້ຜະລິດຕະພັນໃນທ້ອງຖິ່ນ ແລະ ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ, ລວມມີ ວັດສະດຸໃນການປຸກສ້າງ, ສິນຄ້າທີ່ເປັນທຶນຮອນ, ອາຫານ, ເຄື່ອງດື່ມ ແລະ ສິນຄ້າບໍລິໂພກ.<br><br>D.1.2. ການຊື້ ແລະ ການຊົມໃຊ້ຜະລິດຕະພັນທີ່ບໍ່ຍ່ອຍສະຫຼາຍ ແລະ ຍ່ອຍສະຫຼາຍແມ່ນໄດ້ຖືກປະເມີນ ແລະ ການຈັດຕັ້ງໄດ້ມີການຄົ້ນຫາວິທີທາງໃນການຫລຸດຜ່ອນການນໍາໃຊ້ຜະລິດຕະພັນເຫຼົ່ານັ້ນ.<br><br>• D.1.3. ການຊົມໃຊ້ພະລັງງານຖືກວັດແທກກໍາກັບ, ແຫຼ່ງທີ່ມາຖືກລະບຸໄວ້, ແລະ ການວັດແທກຕ່າງໆແມ່ນຖືກນໍາມາປະຕິບັດ ເພື່ອຫລຸດຜ່ອນການຊົມໃຊ້ທົ່ວທຸກດ້ານ, ແລະ ຊຸກຍູ້ສົ່ງເສີມການຊົມ ໃຊ້ພະລັງງານທົດແທນ.<br><br>• D.1.4. ການຊົມໃຊ້ນໍ້າແມ່ນຖືກວັດແທກ, ແຫຼ່ງທີ່ມາຖືກລະບຸໄວ້, ແລະ ການວັດແທກແມ່ນຖືກນໍາມາປະຕິບັດ ເພື່ອຫຼຸດຜ່ອນການນໍາໃຊ້ນໍ້າໂດຍລວມ. ແຫຼ່ງທີ່ມາຂອງນໍ້າແມ່ນມີຄວາມຄົງຕົວ ແລະ ບໍ່ໄດ້ສົ່ງຜົນກະທົບທາງດ້ານລົບໃຫ້ກັບສະພາບແວດລ້ອມ.</td></tr>
<tr><td>D.2.</td><td>ການຫລຸດຜ່ອນມົນລະພິດ<br><br>• D.2.1. ການປ່ອຍອາຍພິດເຮືອນແກ້ວກະຈົກຈາກແຫຼ່ງຕ່າງໆ ແມ່ນໄດ້ຖືກຄວບຄຸມໂດຍອົງການຈັດຕັ້ງ, ໄດ້ມີການວັດແທກການປ່ອຍອາຍພິດ, ຂັ້ນຕອນໃນການຄວບຄຸມແມ່ນໄດ້ຖືກນໍາມາປະຕິບັດເພື່ອຫລຸດຜ່ອນ ແລະ ລົບລ້າງການປ່ອຍອາຍພິດເຮືອນແກ້ວກະຈົກທີ່ຍັງຄົງເຫຼືອຢູ່.<br><br>• D.2.2. ການຈັດຕັ້ງ ຊຸກຍູ້ໃຫ້ບັນດາລູກຄ້າ, ພະນັກງານ ແລະ ບັນດາຜູ້ສະໜອງຜະລິດຕະພັນຕ່າງໆ ຊ່ວຍກັນຫລຸດຜ່ອນການຂົນສົ່ງທີ່ອາດກໍ່ໃຫ້ເກີດມີການປ່ອຍອາຍພິດເຮືອນແກ້ວກະຈົກ.<br><br>• D.2.3. ນໍ້າເປື້ອນ, ນໍ້າເສຍ ແມ່ນໄດ້ຖືກນໍາມາບໍາບັດເພື່ອໃຫ້ມີຄຸນນະພາບທີ່ດີຂຶ້ນ ແລະ ເພື່ອນໍາກັບມາຊົມໃຊ້ຄືນໃໝ່ ຫຼື ປ່ອຍລົງສູ່ແຫຼ່ງນໍ້າໂດຍບໍ່ສົ່ງຜົນກະທົບທາງ ດ້ານລົບໃຫ້ແກ່ປະຊາຊົນໃນພື້ນທີ່ ແລະ ສິ່ງແວດລ້ອມ.</td></tr>
</table>

| | |
|---|---|
| **D.2.** | • D.2.4. ສິ່ງເສດເຫຼືອ (ຂີ້ເຫຍື້ອ) ແມ່ນໄດ້ຖືກວັດແທກ, ການບໍາບັດແມ່ນໄດ້ຖືກນໍາມາປະຕິບັດເພື່ອຫລຸດຜ່ອນປະລິມານສິ່ງເສດເຫຼືອ, ຖ້າຫາກບໍ່ສາມາດຫລຸດຜ່ອນສິ່ງເສດເຫຼືອເລົ່ານັ້ນໄດ້ກໍ່ຕ້ອງມີການນໍາເອົາກັບມາໃຊ້ຄືນໃໝ່. ນໍາໃຊ້ວິທີການກໍາຈັດຂີ້ເຫຍື້ອທີ່ຕົກຄ້າງໃດໜຶ່ງທີ່ບໍ່ເປັນຜົນຮ້າຍຕໍ່ກັບປະຊາຊົນ ແລະ ສະພາບແວດລ້ອມທ້ອງຖິ່ນ.<br><br>• D.2.5. ຫລຸດຜ່ອນການນໍາໃຊ້ບັນດາວັດຖຸຕ່າງໆທີ່ເປັນອັນຕະລາຍ, ລວມມີ ຢາຂ້າໝູ, ແມງໄມ້, ແລະ ພືດ, ສານຂ້າເຊື້ອຕ່າງໆໃນສະລອຍນໍ້າ, ແລະ ອຸປະກອນວັດຖຸໃຊ້ໃນການອະນາໄມ. ນໍາໃຊ້ສິ່ງທີ່ມີຢູ່ ຫ◌ິ◌່ສາມາດທົດແທນໄດ້, ໂດຍໃຊ້ຜະລິດຕະພັນທີ່ບໍ່ເປັນອັນຕະລາຍ. ການເກັບມ້ຽນທັງໝົດ, ການນໍາໃຊ້, ການກໍາຈັດ, ແລະ ການກໍາຈັດສານເຄມີໂດຍມີການຈັດການອັນເໝາະສົມ.<br><br>• D.2.6. ການຈັດຕັ້ງມີການດໍາເນີນການປະຕິບັດງານເພື່ອຫລຸດຜ່ອນມົນລະພິດທາງສຽງ, ແສງ,ທາດແຫຼວທີ່ສາມາດລະລາຍ, ລະເຫີຍ ລວມເຖິງສິ່ງເສດເຫຼືອຈາກຂະບວນການຜະລິດ,ການເຊາະເຈື່ອນຂອງດິນ,ການປະກອບຂຶ້ນຂອງຊັ້ນ ໂອໂຊນຕ່າງໆທີ່ມີຢູ່ຖືກທໍາລາຍ, ແລະ ສິ່ງປົນເປື້ອນໃນອາກາດ, ນໍ້າ ແລະ ດິນ. |
| **D.3.** | ການອະນຸລັກຊີວະວິທະຍານາໆພັນ, ລະບົບນິເວດວິທະຍາ, ແລະ ລັກສະນະໜ້າດິນຕ່າງໆ<br><br>• D.3.1. ສາຍພັນສັດປ່າຕ່າງໆບໍ່ໄດ້ຖືກໄລ່ລ່າ, ບໍ່ໄດ້ຖືກບໍລິໂພກ, ວາງສະແດງ, ຂາຍ, ຫຼື ເພື່ອການຄ້າ, ຍົກເວັ້ນເປັນສ່ວນໜຶ່ງຂອງກິດຈະກໍາທີ່ມີການວາງລະບຽບທີ່ຮັບປະກັນວ່າການນໍາໃຊ້ຂອງເຂົາເຈົ້າມີຄວາມຍືນຍົງ, ແລະ ມີຄວາມສອດຄ່ອງກັບກົດໝາຍແຕ່ລະທ້ອງຖິ່ນຈົນເຖິງລະດັບສາກົນ.<br><br>• D.3.2.  ຫ້າມບໍ່ໃຫ້ມີການກັກຂັງສັດປ່າໄວ້, ຍົກເວັ້ນແຕ່ແມ່ນກິດຈະກໍາຕາມທີ່ກົດລະບຽບກໍານົດໄວ້ເໝາະສົມ, ທັງໃຫ້ສອດຄ່ອງກັບກົດໝາຍທ້ອງຖິ່ນ ແລະ ກົດໝາຍສາກົນ. ສິ່ງມີຊີວິດຕ່າງໆທີ່ຖືກປົກປ້ອງ ແລະ ສັດປ່າຈະຖືກຮັກສາໂດຍບັນດາບຸກຄົນທີ່ໄດ້ຮັບອະນຸຍາດ ແລະ ມີການຮັກສາສັດປ່າເລົ່ານັ້ນໄວ້ໃນບ່ອນຢູ່ ແລະ ມີການເອົາໃຈໃສ່ຮັກສາໄວ້ຢ່າງເໝາະສົມ ແລະ ມີເມດຕາກະລຸນາ.<br><br>• D.3.3. ການຈັດຕັ້ງດໍາເນີນການຄວບຄຸມເພື່ອຫຼີກລ້ຽງການຣຸກຮານ ພັນໄມ້ຫາຍາກ.<br><br>ພັນໄມ້ດັ້ງເດີມໃນທ້ອງຖິ່ນແມ່ນຖືກນໍາໃຊ້ເພື່ອການຈັດການດັດແປງຕອນດິນ ແລະ ເຮັດໃຫ້ກັບຄືນສູ່ສະພາບເດີມ.<br><br>• D.3.4. ການຈັດຕັ້ງສະໜັບສະໜູນ ແລະ ມີສ່ວນຮ່ວມຕໍ່ການຮັກສາລະບົບນິເວດວິທະຍາ<br><br>ລວມມີເຂດປ່າສະຫງວນຕ່າງໆ ແລະ  ເຂດຕ່າງໆທີ່ມີຄຸນຄ່າສູງທາງໃນດ້ານນິເວດວິທະຍາ.<br><br>• D.3.5. ການປະຕິບັດຕໍ່ສັດປ່າ, ພິຈາລະນາບັນດາຜົນກະທົບທີ່ເພີ່ມຂຶ້ນ, ຫ້າມສ້າງຜົນກະທົບອັນເປັນໄປໃນທາງບໍ່ດີຕໍ່ກັບການຢູ່ລອດ ແລະ ພຶດຕິກໍາຂອງບັນດາປະຊາຊົນໃນການດໍາລົງຊີວິດຄູ່ກັບປ່າ. ຫລຸດຜ່ອນສິ່ງທີ່ລົບກວນລະບົບນິເວດວິທະຍາທາງທໍາມະຊາດ, ຊ່ວຍປັບຕົວເຂົ້າສູ່ຊີວິດປົກກະຕິ, ແລະ ຊ່ວຍຊຸກເຊີຍການຄຸ້ມຄອງສັດປ່າເພື່ອການອະນຸລັກໄວ້. |